ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 8:
## The Epic Story of Thao Hung - Thao Cheuang (Con.)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 3:** ລະບົບແນວຄິດຂອງລະບອບສັກດີນາລາວ
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

ເວລາ: 90 ນາທີ

| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
|---|---|
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ປະເພນີການເຮັດບຸນ<br>- ປະເພນີການໃຫ້ຂອງຕ້ອນ-ເຄື່ອງບັນນາການ ແລະ ການປະຕິບັດຖານ<br>- ປະເພນີໃນການນຸ່ງຖື ແລະ ແຕ່ງຕົວເອ້ຍ້ອງ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ປະເພນີການເຮັດບຸນ<br>- ປະເພນີການໃຫ້ຂອງຕ້ອນ-ເຄື່ອງບັນນາການ ແລະ ການປະຕິບັດຖານ<br>- ປະເພນີໃນການນຸ່ງຖື ແລະ ແຕ່ງຕົວເອ້ຍ້ອງ | **ຄໍາຖາມຫຼັກ (Questions):**<br>1) ປະເພນີການເຮັດບຸນໃນມະຫາກາບທ້າວຮຸ່ງ-ທ້າວເຈືອງເພິ່ນເຮັດແນວໃດ?<br>2) ປະເພນີການໃຫ້ຂອງຕ້ອນ-ເຄື່ອງບັນນາການ ແລະ ການປະຕິບັດຖານເພິ່ນເຮັດແນວໃດ?<br>3) ປະເພນີການນຸ່ງຖື ແລະ ການແຕ່ງຕົວເອ້ຍ້ອງມີແນວໃດແດ່? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງເຊັ່ນ ການເຮັດບຸນ, ການໃຫ້ຂອງຕ້ອນ-ບັນນາການ, ການນຸ່ງຖື ແລະການແຕ່ງຕົວເອ້ຍ້ອງ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນໍາການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄໍາຕອບກິດຈະກໍາຂອງນັກສຶກສາ<br>- ການສັງຮວມກິດຈະກໍາ<br>- ຜົນການກວດວຽກບ້ານ |

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**

ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມມະຫາກາບທ້າວຮຸ່ງ-ທ້າວເຈືອງ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.

- **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງປະເພນີການຂໍລູກຈາກແຖນ, ການສູ່ຂໍສາວ ແລະການແຕ່ງດອງໃນມະຫາກາບທ້າວຮຸ່ງ-ທ້າວເຈືອງໂດຍຫຍໍ້.
- **ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 3**

**ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ" (ຕໍ່)**

**3.3 ວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງ**

**3.3.3 ປະເພນີການເຮັດບຸນ** (20 ນາທີ)

**<u>ກິດຈະກຳ 1:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ປະເພນີການເຮັດບຸນໃນມະຫາກາບທ້າວຮຸ່ງ-ທ້າວເຈືອງເພິ່ນເຮັດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ຄຳວ່າ: "ບຸນ" ມີຄວາມໝາຍວ່າ ຄວາມດີ ຫຼື ຄຸນງາມຄວາມດີ, ຄວາມສຸກກາຍສະບາຍໃຈ, ຄວາມສັດຈະທຳ ທຸກຄົນໄດ້ສຳລະສະລ້າງຄວາມບໍ່ດີຈາກນິໄສໃຈຄໍ, ການປະພຶດ, ການກະທຳຕ່າງໆ. ເຖິງວ່າບໍ່ເປັນຮູບປະທຳທີ່ຄົນເຮົາສາມາດຈັບບາຍເປັນຕ່ອນເປັນໂຕໄດ້ກໍຕາມແຕ່ເຮົາທຳບຸນເພື່ອສ້າງຄວາມດີ, ຄວາມສະຫງົບເພື່ອສະສົມຄວາມເຫຼື້ອມໃສໃນສັດທາ, ທຳຊົ່ວໄດ້ຊົ່ວ, ທຳບຸນຍ່ອມໄດ້ຄຸນ.

ການເຮັດບຸນມັນກໍຄືກັບທຳຄວາມດີໃຫ້ແກ່ຕົນເອງ. ດັ່ງນັ້ນທຸກຄົນກໍລ້ວນແຕ່ປາຖະໜາແຕ່ສິ່ງທີ່ດີ, ເມື່ອເຮົາຫວນຄືນສັງຄົມກ່ອນນີ້ເປັນເວລາຮ້ອຍປີພັນປີ ຫຼື ກ່ອນທີ່ສາສະໜາພຸດບໍ່ທັນພົ້ນເດັ່ນໃນອານາຈັກລາວລ້ານຊ້າງເມື່ອ 700 ປີກ່ອນນີ້, ມະນຸດເຮົາກໍມີການທຳບຸນກຸສົນຕາມຍຸກສະໄໝປະຫວັດສາດ, ຕາມສະພາບສັງຄົມຄວາມເຂົ້າໃຈຂອງຄົນໃນຍຸກນັ້ນເຊິ່ງມັນຈະມີຄວາມແຕກຕ່າງກັນຍຸກໄໝປັດຈຸບັນເພາະວ່າສະໄໝປັດຈຸບັນຄົນເຮົາຊາບຊຶມສາສະໜາພຸດຫຼາຍສົມຄວນແລ້ວ.

ຢູ່ໃນເລື່ອງທ້າວຮຸ່ງ-ທ້າວເຈືອງຕອນທີ 38 (ທ້າວຮຸ່ງຕາຍຄາສະໜາມຮົບຢູ່ເມືອງປະກັນ) ແລະ ທ້າວຮຸ່ງໄດ້ນຳພາໄພ່ພົນເສນາອາມາດທະຫານຜີທັງຫຼາຍທີ່ເສຍຊີວິດໃນສະໜໍລະພູມຂຶ້ນໄປເມືອງຟ້າດັ່ງຄຳກອນທີ່ວ່າ:

ເມື່ອນັ້ນ ຄອນຂາບແລ້ວສະເດັດດ່ວນ ລາລີ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ທົ່ງອາຊະໄນຂີ່ຜາຍ ຜັນຂຶ້ນ
ເຖິງທີ່ນະຄອນຫຼວງຊັ້ນເມືອງອິນ ເມີນມຸ່ງ
ເຮື່ອງເຮື່ອເຫຼື້ອມດູແຈ້ງ ສ່ອງງາມ
ແມ້ງໜຶ່ງ ເຖິງຄ່ອງກວ້າງແກ້ວເກດ ຈຸລາ
ລຳລຳມີຢື່ນທຽນ ຕາມໄຕ້
ບູຊາແກ້ວຈຸລາ ພະທາດ
ເຮືອງເຮື່ອຂຶ້ນເຖິງເທົ້າ ຮອດພົມ
ເຊັ່ງຊາເທົ້າທຸກແຫ່ງ ສາທຸການ
ຮອຍທີ່ ບຸນບາສີແຕ່ຫຼັງ ເຫຼືອສ້າງ
ຂໍແກ່ຈຸລາແກ້ວອິນຕາ ມ້າງບາບ
ແມ່ນຊື່ ເວນເກົ່າກ້ຽວກຳໃຫ້ ຫ່າງເສຍ ແດ່ເນີ

(ດວງເດືອນ ບຸນຍາວົງ, ໂອທອງ ຄຳອິນຊູ, ສົມໄພ ວິໄລສັກ ແລະ ຄຳສອນ ທອງມີໄຊ, 2003)

ຢູ່ໃນກອນຕອນນີ້ທ້າວຄອນ (ແອງຄອນ) ຂີ່ມ້າຂຶ້ນໄປເມືອງພະອິນພະພົມໄປເຫັນພະທາດພະພຸດທະເຈົ້າ, ທ້າວແອງຄອນເອົາທຽນໄຕ້ບູຊາພະທາດ. ໃນຄວາມປະສົງຂອງທ້າວແອງຄອນຈະໄປທຳບຸນກູສົນເພື່ອເປັນການຕັດບາບ ຫຼື ລາງບາບ ເພື່ອບໍ່ໃຫ້ມີກຳເວັນນຳກ້ຽວສະໜອງດ້ວຍເຫດຜົນທີ່ວ່າຜູ້ຄົນເຫຼົ່ານັ້ນໄປທຳສົງຄາມຂ້າຄົນຢ່າງຫຼວງຫຼາຍມາແລ້ວ. ທ້າວຮຸ່ງກໍຢ້ານເປັນບາບເປັນກຳນຳຈ່ອງຢູ່ຕະຫຼອດຊາດເຊິ່ງຄວາມມຸ່ງຫວັງອັນນີ້ມັນໄດ້ດັງດັ່ງໄປທົ່ວທຸກສາລະທິດທັງເມືອງມະນຸດ ແລະ ເມືອງພົມ ໃຜໆກໍສາທຸກການຍິນດີນຳເພາະວ່າເມື່ອຄົນເຮົາທຳບາບໄປແລ້ວກໍບໍ່ຕ້ອງການໃຫ້ມີບາບນຳຈ່ອງ. ດັ່ງນັ້ນ, ການທີ່ທ້າວຮຸ່ງຂຶ້ນໄປເມືອງຟ້າ ແລະ ໄປທຳບຸນເພື່ອບໍ່ໃຫ້ມີບາບກຳ, ຈິ່ງຖືວ່າເປັນການສ້າງຄຸນງາມຄວາມດີ, ທຸກຄົນຈິ່ງພໍໃຈ. ທ້າວຮຸ່ງ ແລະ ນາງງ້ອມຜູ້ເປັນມະເຫສີໄດ້ພາໄພ່ພົນໄປເມືອງຟັງຄຳເທດສະໜາຈາກພະເມດໄຕ.

ເມື່ອນັ້ນ ເອກະລາດທ້າວຜູ້ຜ່ານ ເມືອງສະຫວັນ
ປະນົມມືຖວາຍບາດບົງ ປະນົມນ້ອມ
ເມື່ອນັ້ນ ພຸດໂທເຈົ້າເມດໄຕທອງ ຕົນປະເສີດ
ສະເດັດຂຶ້ນຮ້ານບາລັງແກ້ວ ເທດທຳ
ກັບທັງເຖລາເຈົ້າແສນຕົນ ນົບນັ່ງ
ຟັງພະຜູ້ເມດໄຕເຈົ້າ ເທດທຳ
ທຸກເທດທ້າວໃຫ້ເຊື່ອ ກອງບຸນ
ຮັກສາສົນໂຍດຍືນ ຍາວຟ້າ
ພະກຳເທສະໜາຖ້ວນຫຼາຍກັນ ແລ້ວຢ່າ
ທຽນໃຫຍ່ຕັ້ງຕໍ່ໜ້າລຽນໄວ້ ໝື່ນຖັນ...
ພຸ່ງໆພ້ອມໃສ່ບາດ ເຕັມອາຮາມ

| | |
|---|---|
| ໜືວງບາແຈກທານ | ປຸນແລ້ວ |
| ແຜ້ວຊູ່ດ້ານດູລ້ອນ | ຮາບງາມ... |
| ທຸກເບື່ອງພ້ອມໝາກແຂບ | ພູຈອງ |
| ທັງທຽນຄໍາໝື່ນດວງ | ລຽນໄວ້ |
| ສົມມາເຈົ້າເມດໄຕ | ຕົນປະເສີດ ຈິງເຖີ້ນ |
| ຂ້ອຍກໍ ແຕ່ງດອກໄມ້ທຽນພ້ອມ | ໂກດຖວາຍ |
| ຂໍແກ່ ພູດໂທເຈົ້າຕັດປ່ອຍ | ວາງເວນ ທ່ຽວເຖີ້ນ |
| ຂໍຢ່າເປັນເລລາແກ່ຕົນ | ຕົວຂ້ອຍ |
| ເມື່ອນັ້ນ ເມດໄຕເຈົ້າແສນຕາ | ຫຼີງລໍ່າ |
| ຕ້ານໄຕ່ຂໍ້ຄໍາແມ້ງ | ແມ່ທໍາ |

(ດວງເດືອນ ບຸນຍາວົງ, ໂອທອງ ຄໍາອິນຊູ, ສົມໄພ ວິໄລສັກ ແລະ ຄໍາສອນ ທອງມີໄຊ, 2003)

ໃນຄໍາກອນເຮົາເຫັນວ່າ: ໃນສະໄໝບູຮານການທໍາບຸນເພື່ອສ້າງຄວາມດີນັ້ນມັນເປັນຄວາມມຸ່ງຫວັງຂອງປະຊາຊົນທຸກຄົນ, ພ້ອມນັ້ນການທໍາບຸນຍັງເປັນປະເພນີຮີດຄອງມາແລ້ວຫຼາຍຮ້ອຍຫຼາຍພັນປີ. ໃນສະໄໝນັ້ນເຖິງວ່າສາສະໜາພຸດບໍ່ທັນຮຸ່ງເຮືອງໃນໝູ່ປະຊາຊົນແຕ່ມັນກໍສ່ອງແສງຢ່າງຈະແຈ້ງວ່າການຟັງເທດສະໜາ, ການຕັກບາດແຜ່ພະເມດໄຕ, ການສ້າງຄວາມດີ, ການບໍ່ໃຫ້ມີບາບກໍາອະນາຄົດມັນເປັນເລື່ອງທີ່ເປັນທໍາໃນສັງຄົມເຊິ່ງເວົ້າງ່າຍໆວ່າຄົນເຮົາຢູ່ໃດກໍບໍ່ທັນໄດ້ສ້າງຄວາມດີຄວາມຊອບແກ່ຕົນ ບໍ່ເມດຕາປານີຕໍ່ຄົນອື່ນກໍຄວນສ້າງໂອກາດໃຫ້ຕົນເອງ ຫຼື ເມື່ອຕົນເອງກະທໍາຜິດຕໍ່ຄົນອື່ນຢ່າງໜ້ອຍກໍຕ້ອງໄດ້ຂໍອະໄພໂທດນໍາ ຖືວ່າເປັນຄວາມດີແລ້ວ.

ປະເພນີການທໍາບຸນໃນເລື່ອງ ທ້າວຮຸ່ງ -ທ້າວເຈືອງ, ຖ້າທຽບກັບການການທໍາບຸນໃນສະໄໝປັດຈຸບັນກໍມີຄວາມແຕກຕ່າງຢູ່ບາງສ່ວນກໍບ່ອກວ່າ: ໃນມະຫາກາບທ້າວຮຸ່ງ ທ້າວເຈືອງການທໍາບຸນນອກຈາກຈະມີຄວາມໝາຍໃນການສ້າງຄຸນງາມຄວາມດີ, ຄວາມສຸກແລ້ວຍັງມີຄວາມໝາຍວ່າ: ເປັນການລ້າງ-ຕັດບາບທີ່ໄດ້ສ້າງມາໃນອະດີດເພື່ອບໍ່ໃຫ້ບາບກໍານໍາຈ່ອງຈື່ງທໍາທານໂດຍມີພະເມດໄຕເປັນຜູ້ດູແລ.

ສ່ວນການທໍາບຸນໃນປັດຈຸບັນແມ່ນການທໍາບຸນກຸສົນຕາມຄໍາສັ່ງຂອງສາສະໜາພຸດ ໃນຍຸກຮຸ່ງເຮືອງດ້ວຍຄໍາວ່າ: ທໍາດີໄດ້ດີ, ທໍາຊົ່ວ ໄດ້ຊົ່ວ; ເຮົາທໍາບຸນກຸສົນກິນທານໃນຊາດນີ້ຊາດໜ້າເຮົາກໍຈະໄດ້ບຸນ, ແຕ່ໃນຄວາມໝາຍທີ່ແທ້ຈິງແລ້ວ,ໃນຄໍາສັ່ງຂອງສາສະໜາພຸດແທ້, ການທໍາຄວາມດີໃນຊາດນີ້ຈະບໍ່ມີຄວາມໝາຍວ່າເປັນການລ້າງບາບໃນຊາດກ່ອນ. ແຕ່ຄົນເຮົາພະຍາຍາມສ້າງຈິດສໍານຶກໃໝ່ຂຶ້ນມາເພື່ອໃຫ້ເປັນກໍາລັງໃຈໃນການທໍາບຸນ, ແຕ່ຢູ່ໃນແງ່ໄສຍະສາດການທໍາບຸນເປັນການຕັດບາບ-ລ້າງບາບໄດ້ຄືດັ່ງເລື່ອງ ທ້າວຮຸ່ງ-ທ້າວເຈືອງ.

**3.3.4 ປະເພນີການໃຫ້ຂອງຕ້ອນ-ເຄື່ອງບັນນາການ ແລະ ການປະຕິບັດຖານ** (20 ນາທີ)

**<u>ກິດຈະກໍາ 2:</u>**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

1) ປະເພນີການໃຫ້ຂອງຕ້ອນ-ເຄື່ອງບັນນາການ ແລະ ການປະຕິບັດຖາມເພິ່ນເຮັດແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ປະເພນີການໃຫ້ຂອງຕ້ອນເຄື່ອງບັນນາການໃຫ້ແກ່ບຸກຄົນສຳຄັນເຊິ່ງບໍ່ຈຳແນກຄົນໃນຕະກຸນ ແລະ ຄົນນອກຕະກຸນນີ້ແມ່ນມີມາແຕ່ເຫິງນານ. ຢູ່ໃນເລື່ອງທ້າວຮຸ່ງ-ທ້າວເຈືອງນີ້ສະແດງອອກຢ່າງຈະແຈ້ງທີ່ສຸດໃນເວລາທ້າວຮຸ່ງເກີດມາກໍມີຜູ້ມອບດາບຮາຍເຊັງ, ຄ້ອງເງິນ, ຊ້າງ ແລະ ສິ່ງຂອງຕ່າງໆມາມອບໃຫ້ເປັນຂອງຂວັນຈົນທ້າວຮຸ່ງມີຊ້າງຫຼາຍໂຕ.

ທຳມະຊາດເຊື້ອຊ້າງເຜືອກ ແຖນປັ້ງ
ຄູນບາສີລູກລຸນ ແຖນຕື້
ເຂົາກໍປຸນປອງລ້ຽງຖະໜອມແພງ ຮັກຍິ່ງ
ງາກ່ອງສ້ອຍສະເໜີໄລ້ ຫຼໍ່ໂສມ
ຂຶ້ນຊີ່ໄດ້ຊ້າງເຜືອກ ພານຄຳ
ກົງຊົມພູໄປ່ທັນ ທຽມໄດ້
ຝູງໝູ່ພາຍດຳຂ້າພູສູງ ດັ້ນຮອດ
ເຂົາກໍ ນຳດາບກ້າທັງຄ້ອງ ຄູ່ເງິນ.

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ, 2000)

ນອກຈາກນີ້ທຸກໆຄັ້ງທີ່ມີຜູ້ຄົນໄປມາຫາສູ່ກັນບໍ່ວ່າແຕ່ການຢ້ຽມຖາມຂ່າວ, ການສູ່ຂໍຜູ້ສາວ, ການເດີນທາງການຕ້ອນຮັບແຂກຕ່າງບ້ານທ່ານຕ່າງເມືອງເຈົ້າຂອງເຮືອນ ຫຼື ເຈົ້າຂອງທ້ອງຖິ່ນໃນເຂດນັ້ນໆເຂົາເຈົ້າຈະຕ້ອງຮັບແຂກດ້ວຍຂັນໝາກຂັນພູ (ຂັນສະລາ), ເຂົ້າປາອາຫານ, ສັດສິ່ງຊະນິດແຊບເປັນຫາບຢ່າງຫຼວງຫຼາຍ. ພ້ອມກັນນັ້ນຜູ້ທີ່ມາຢ້ຽມຢາມ ຫຼື ຜ່ານໄປເຂົາກໍມີການກະກຽມບັນນາການຂອງຕ້ອນຂອງຝາກໃຫ້ກັນ ແລະ ກັນເໝືອນກັບວ່າເປັນການແລກປ່ຽນກັນ ແຕ່ຄວາມຈິງແລ້ວມັນເປັນການປະຕິບັດກັນທີ່ເປັນປະເພນີ.

ບັນດາສິ່ງຂອງຕ່າງໆນາໆທີ່ນຳມາເປັນຂອງຕ້ອນມອບໃຫ້ເຊິ່ງກັນ ແລະ ກັນຈະເປັນແຜ່ນແພ, ຜ້າ ໄໝ, ເງິນຄຳ, ແກ້ວແຫວນ, ຊ້າງ ມ້າພ້ອມດ້ວຍອານປະດັບເຄື່ອງຄຳ, ເຄື່ອງຫອມເຊັ່ນ: ຕົ້ນຄູ້, ເສນເຫຼົ່ານີ້ເປັນຕົ້ນ. ເມື່ອໄປສູ້ຮົບກັບມາແລ້ວມີການສະຫຼອງໄຊຊະນະ, ຜູ້ເປັນເຈົ້າປົກຄອງເມືອງກໍໄດ້ປະທານລາງວັນໃຫ້ແກ່ແມ່ທັບນາຍກອງ, ອາມາດມົນຕີພ້ອມທັງເລື່ອນຍົດຊັ້ນໃຫ້ຕາມຄວາມເໝາະສົມໂດຍອີງໃສ່ຜົນງານເຊັ່ນ: ເມື່ອກຳລັງຂອງທ້າວຮຸ່ງຕີເມືອງປະກັນສຳເລັດແລ້ວ, ທ້າວຮຸ່ງກໍຈັດແຈງແຕ່ງກາຍໃຫ້ອ້າຍຄວ່າງເປັນເຈົ້າປົກຄອງເມືອງປະກັນແທນທ້າວກວ່າຜູ້ເສຍຊີວິດໃນສະໜໍລະພູມ. ຜູ້ທີ່ບໍ່ໄດ້ເລື່ອນຕຳແໜ່ງກໍໄດ້ຮັບສິດຜົນປະໂຫຍດຢ່າງຊອບທຳ.

ນອກຈາກວັດຖຸສິ່ງຂອງທີ່ກ່າວມາແລ້ວຍັງມີຂ້ອຍຂ້າຍິງຊາຍ, ສາວສະໜົມ, ໄຮ່ນາ, ລາຍໄດ້ຈາກຕະຫຼາດ, ຈາກພາສີຫົວເມືອງຕ່າງໆ ຢ່າງມາກມາຍອີກດ້ວຍເຊັ່ນ: ເມື່ອເຈົ້າຊາຍທ້າວຮຸ່ງເຕີບໂຕຂຶ້ນມາຈົນໄດ້ກາຍເປັນກະສັດຜູ້ຊົງເດຊາອານຸພາບ, ມີຊື່ຊຽງຮຽງນາມດັ່ງກ້ອງໄປທົ່ວທຸກເມືອງ ແລະ ເປັນທີ່ຮູ້ຈັກຂອງບັນດາກະສັດຢູ່ຕ່າງປະເທດ, ຕ່າງເມືອງໃຜໆກໍເຂົ້າມາເຝົ້ານ້ອມ, ຖວາຍເຄື່ອງບັນບັນນາການເພື່ອເປັນການສະແດງເຖິງຄວາມຈົງຮັກພັກດີ, ເຄື່ອງ

ທີ່ແຂກຕ່າງເມືອງນຳມາຖວາຍກໍມີເພັດນິນຈິນດາ, ແຜ່ນແພທີ່ມີຄ່າແພງທີ່ສຸດ, ເຄື່ອງຫອມ, ຊ້າງມ້າ ແລະ ອື່ນໆ. ສ່ວນທ້າວຮຸ່ງກໍຕອບແທນດ້ວຍຂັນໝາກຂັນພູ, ຊ້າງ, ມ້າເຊັ່ນກັນ:

ຜູ້ຜ່ານພື້ນຫໍ້ໃຫຍ່ ໜອງແສ

ມີບັນນາການເຄື່ອງຖວາຍ ທັງຄູ້

ແຮລາຍກ້ຽວສິນໂຄມ ຮ້ອຍແຜ່ນ

ທັງໝູ່ຜ້າຕາແຕ້ມ ເຄື່ອງຄຳ...

ພິເສດພ້ອມຄຸບເຄື່ອງ ບັນນາການ

ມະຫານິນຄອນຄ່າຄຳ ພັນກ້ອນ

ຮຸ່ງໆເຫຼື້ອມແສງປານ ສຸລິເຍດ

ທັງທ່ອນຜ້າລາຍເອື້ອ ຄ່າຄຳ...

ປະເສີດເນື້ອທ້າວຮຸ່ງ ຟັງຄະດີ

ຮົມເພິງພໍຂອບໃຈ ຈິງແລ້ວ

ຊະລອນລ້ອນຂັນສີ ຊອງໝາກ

ມ້ອນກ່າວແລ້ວໄປໃຫ້ ແຂກເມືອງ...

ເຈົ້າກໍ ແຫນຮ່າງໃຫ້ໄປມອບ ຝູງນາຍ

ຜານໆຍໍຍູຄຳໃສ່ຫົວ ກອມເກົ້າ

ບັນນາການເຈົ້າມີພາຍ ຮ້ອຍຄູ່

ທັງໝູ່ມ້າອານພ້ອມ ເຄື່ອງຄຳ.

(ດວງເດືອນ ບຸນຍາວົງ, ໂອທອງ ຄຳອິນຊູ, ສົມໄພ ວິໄລສັກ ແລະ ຄຳສອນ ທອງມີໄຊ, 2003)

ເລື່ອງນີ້ນອກຈາກສະແດງເຖິງປະເພນີໃນການໃຫ້ຂອງຕ້ອນບັນນາການແລ້ວ, ຍັງມີປະເພນີສະແດງເຖິງການປະຕິສັນຖານຢ່າງອ່ອນນ້ອມ. ການປະຕິສັນຖານນີ້ບໍ່ສະເພາະແຕ່ໄພ່ຟ້າລາຊະດອນຕ້ອນຮັບເຈົ້ານາຍເທົ່ານັ້ນ, ສ່ວນອາດຍາເຈົ້ານາຍຜູ້ເປັນກະສັດກໍສະແດງຄວາມຮັກແຂກແພງຄົນຢ່າງບໍ່ເລືອກ, ນອກຈາກການຕ້ອນຮັບດ້ວຍຂັນໝາກແລ້ວ, ທ້າວຮຸ່ງກໍຍັງຮັບຕ້ອນດ້ວຍພາເຂົ້າເຫຼົ້າໄຫທີ່ແຊບຊ້ອຍໃຫ້ແຂກໄປໄຫມາກິນອີ່ມທຸກຄັ້ງດັ່ງຄຳກອນລຸ່ມທີ່ວ່າ:

ແຕ່ນັ້ນ ມ້ຽນປາກແລ້ວເລີຍລອດ ຈັດແລງ

ເຂົາກໍ ດາໄຫພອນຮີບພານ ເພັງນ້ຳ

ກ່າວແກ່ ນາຍແສງໃຊ້ຊິມຄະດີ ໂດຍດ່ວນ

ຢຽວວ່າ ຫລານຢູ່ນ້ຳເມືອງກວ້າງ ຄ່ອຍຄອງ...

ເຂົາກໍ ປະນົມນອບນໍ້ວນົບນອບ ເທພີ

ເຊີນນາຍຮັກເຮັ່ງເອົາ ໂຕງຕົ້ນ

ມັນກໍ ຢ່າສີແກ້ວພິນກອງ ກິນກ່ອນ

ວາງເລັ່ງລິ້ນອັນນ້ອຍ ໜຶ່ງແຖມ.

(ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ, 2000)

**3.3.5 ປະເພນີໃນການນຸ່ງຖື ແລະ ແຕ່ງຕົວເອ້ຢ້ອງ** (20 ນາທີ)

**ກິດຈະກໍາ 3:**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ
  1) ປະເພນີການນຸ່ງຖື ແລະ ການແຕ່ງຕົວເອ້ຢ້ອງມີແນວໃດແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (15 ນາທີ)

**5.1 ການແຕ່ງຕົວດ້ວຍເຄື່ອງຫອມ ແລະ ເຄື່ອງເອ້ຢ້ອງ**

ຊະນິດຂອງນໍ້າຫອມກໍມີນໍ້າຫອມມາຈາກທໍາຊາດເຊັ່ນ: ນໍ້າເສນ, ຄູ້, ກະລັນຜັກເພື່ອໃຊ້ໂຮຍ ຫຼື ທາຕົນຕົວພາຍຫຼັງອາບນໍ້າແລ້ວ ຫຼື ກ່ອນຈະນຸ່ງເຄື່ອງດັ່ງກອນທີ່ວ່າ:

ຊະບອງເນື້ອຮວາຍຈັນ ຫອມຮື່ນ
ກະລັນຜັກມ້າວສົມຄູ້ ກອມເສນ
ພິມມະລິ່ນນໍ້າກອງດອກ ມາລາ...
ເມື່ອນັ້ນຝຸງສາວອູ້ມກະອອມເອົາ ອົບອາບ.

(ດວງເດືອນ ບຸນຍາວົງ, ໂອທອງ ຄໍາອິນຊູ, ສົມໄພ ວິໄລສັກ ແລະ ຄໍາສອນ ທອງມີໄຊ, 2003)

ນອກຈາກນີ້ກໍມີການເອ້ຢ້ອງດ້ວຍເຄື່ອງເອ້ທີ່ມີຄຸນຄ່າສູງທັງສຸພາບບຸລຸດ ແລະ ສຸພາບສະຕີໃນເຄື່ອງສ້ອຍສັງວານ, ສາຍຄໍ, ປອກແຂນ, ຕຸ້ມຫູ, ມ້າວ, ແຫວ, ກະໂຈມຫູ ແລະ ເຄື່ອງເອ້ອື່ນໆອີກຫຼາຍຢ່າງ. ຖ້າເປັນເຄື່ອງປະດັບຫູກໍຈະມີ: ກະຈອນຫູ, ຕ່າງ, ເລົາໂຂ່ງ ແລະ ກຸ່ຍ. ເຄື່ອງເຫຼົ່ານີ້ມີລັກສະນະພິເສດເຊັ່ນ: ກະຈອນເປັນເຄື່ອງປະດັບຫູຊະນິດໜຶ່ງທີ່ມີຂະໜາດໃຫຍ່ກວມບັງເຖິງແກ້ມດັ່ງຄໍາກອນທີ່ວ່າ:

ກະຈອນກວມແກ້ມໄກວແດ ດານສະຫວາດ
ເລັ້ງລໍ້າແທ້ຕາພົ້ງ ພາດໄຫຼ...
ທັງເພດພັ້ງປະຈິດຮູບ ກິນນະລອນ
ພຣະເກສາມັດຜົມ ດັ່ງນິນ ນາງຍ້ອມ
ທັງກະຈອນຕ້າງເລົາຄໍາ ປະດັບດອກ...
ຫູໃສ່ກຸ້ຍທວຍເຂັ້ມ ລາກດິນ
ປະດັບຫູຕ້າງເລົາໂຂ່ງ ຂາວສາ
ມືບາຍແຫວນໃສ່ມື ຄວນນິ້ວ
ແພງນິ້ວສວຍໃສ່ ນິມພອນ
ລອນເລືອແກ້ວຊຸບນິ້ວ ຄູ່ຄວນ.

(ດວງເດືອນ ບຸນຍາວົງ, ໂອທອງ ຄໍາອິນຊູ, ສົມໄພ ວິໄລສັກ ແລະ ຄໍາສອນ ທອງມີໄຊ, 2003)ເຄື່ອງປະດັບກາຍທີ່ກ່າວມານີ້ ມາຮອດຍຸກປັດຈຸບັນເຮົາຍັງເຫັນວ່າປະຊາຊົນລາວທົ່ວທຸກພາກຍັງຄົງຮັກສາໄວ້ດັ່ງເດີມພຽງແຕ່ເປັນການປັບປ່ຽນສະພາບບາງເຄື່ອງປະດັບເພື່ອຄວາມງາມ, ຄວາມສອດຄ່ອງກັບສັງຄົມເທົ່ານັ້ນ.

**5.2 ເຄື່ອງນຸ່ງຫົ່ມຂອງຊາຍ-ຍິງ ແລະ ການແຕ່ງຕົວ**

ເສື້ອຜ້າອາພອນ, ແພບ່ຽງ, ສິ້ນ, ໂສ້ງ ແລະ ໝວກ. ຄົນບູຮານເຂົາເຈົ້າຈະຍ້ອມສີໃຫ້ຄືສີທີ່ມີຢູ່ຕາມທໍາຊາດຄື: ຂາວ, ແດງ, ສົ້ວ, ເຫຼືອງ, ຂຽວ, ແສດ, ມ່ວງ, ອອນ... ພິເສດແມ່ນຫົວສິ້ນຂອງແມ່ຍິງສ່ວນຫຼາຍຈະເປັນສີແດງ. ສ່ວນສີເຫຼືອງ, ຂຽວ... ບໍ່ປາກົດມີດັ່ງຄໍາວ່າ: "ເຕື້ອງໆສິ້ນຫົວແດງດູອາດ" ຖ້າແມ່ນເສື້ອບໍ່ວ່າແຕ່ຍິງ-ຊາຍປາກົດມີຫຼາຍກວ່າໝູ່ດັ່ງຄໍາພັນລະນາທີ່ວ່າ:

ພູທອນທວນໂສມງາມອາບສີ ສີງນໍ້າ
ຫົງສິບເສື້ອຜືນແດງ ງ້ອມຝາກ

(ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ, 2000)

ຮື່ນໆເຊື້ອງສົ້ວແສດ ອອນແດງ
ເປັນບໍລິວານຫຼັ່ງນໍາ ຕີນຊ້າງ
ຂາວແດງເນື້ອນາງເມືອງ ອື້ອຄ່າ
ຂຶ້ນຂີ່ຊ້າງຄໍາເຫຼື້ອມ ເທົ່າຕາມ.

(ດວງເດືອນ ບຸນຍາວົງ, ໂອທອງ ຄໍາອິນຊູ, ສົມໄພ ວິໄລສັກ ແລະ ຄໍາສອນ ທອງມີໄຊ, 2003)

ຖ້າເປັນຜູ້ຊາຍບຸກຄົນສໍາຄັນເຊັ່ນ: ພະລາຊາ, ເຈົ້າຊາຍ ຫຼື ອາມາດທີ່ສໍາຄັນຂອງພະຍາ ນັກແຕ່ງຈະພັນລະນາເຖິງການນຸ່ງຖື, ຄຸມຜ້າເຊີງທີ່ໃຫຍ່, ມີຍອຍປະເຄືອບຄໍາທີ່ເຫຼື້ອມຍາບໆສ່ວນຫຼາຍກໍຈະເປັນສີລາຍແດງ, ເປັນສີມີການຖັກແສ່ວດ້ວຍຮູບລວດລາຍເຊັ່ນ: ລວງສູງ (ລາຍງູ, ລາຍນາກ), ລາຍດອກໄມ້ເປັນຕົ້ນແມ່ນດອກບົວ, ລາຍມອນ, ລາຍເສືອ, ລາຍມີ, ລາຍນົກ, ລາຍຫົງ ແລະ ລາຍອື່ນໆ. ສ່ວນລາຍໃນທໍາມະຊາດນັກຂຽນພັນລະນາລາຍກ້ອນເມກ, ຕົ້ນໄມ້ດັ່ງຄໍາພັນລະນາ:

ຜືນໜຶ່ງມະຣາມຈານແຈ້ງລວງລາຍ ມອນມາດ
ທ້າວຮຸ່ງຜູ້ຄົງຄ້ອມ ນຸ່ງໃນ
ແຕ່ນັ້ນ ທ້າວຄາດຜ້າພືນດອກ ລາຍເຄືອ
ຂອງແພງມວນແມ່ເມືອງ ປະສົງໃຫ້
ລາຍເຈືອກ້ຽວສີງມອມ ມຽງມ່າຍ.

(ດວງເດືອນ ບຸນຍາວົງ, ໂອທອງ ຄໍາອິນຊູ, ສົມໄພ ວິໄລສັກ ແລະ ຄໍາສອນ ທອງມີໄຊ, 2003)

ນອກຈາກນີ້ເລື່ອງຍັງໄດ້ພັນລະນາເຖິງການແຕ່ງຊົງຜົມດ້ວຍຫຼາກຫຼາຍງົດງາມປະການຕາ, ສີຂອງຜົມເປັນສີດໍາ, ຂຽວເທົາ, ທັງຍິງຊາຍລ້ວນແຕ່ທານໍ້າມັນທີ່ກັ່ນມາຈາກພືດ, ເກົ້າຜົມ, ຜົມແຊມດ້ວຍດອກໄມ້, ແມ່ຍິງເກົ້າຜົມຄັດເກົ້າຄໍາ, ເງິນແຖມຍັງມີຊ່ອງເງິນໃສ່ນໍາອີກດັ່ງຄໍາກອນ:

ໝັກໝ່ອນທ້າວຝູງບ່າວ ແຖມທາງ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ແອງຄອນທອຍໆມາລີໃສ່ຜົມ ຊອນເກົ້າ
ລີກກະຊາດແກ້ວກວມເກດ ກອງມວຍ
ກະດັງງາປັກປິ່ນຄຳ ກວມເກົ້າ
ເກສາຂຽວອອກນິນ ບິນບ້າງ...

(ດວງເດືອນ ບຸນຍາວົງ, ໂອທອງ ຄຳອິນຊູ, ສົມໄພ ວິໄລສັກ ແລະ ຄຳສອນ ທອງມີໄຊ, 2003)

ເມື່ອເຮົາສັງເກດຈາກຄຳເວົ້າເຮົາຈະເຫັນວ່າ: ສະໄໝບູຮານທັງຍິງ ແລະ ຊາຍນິຍົມການໃຊ້ຊີງຜົມເປັນເກົ້າໄດ້, ຖ້າຜົມບໍ່ຍາວຈະເອົາດອກໄມ້ມາຊ້ອນໃສ່ບໍ່ໄດ້. ສິ່ງນັ້ນມັນກໍເປັນຄວາມງາມຢ່າງໜຶ່ງ, ພ້ອມນັ້ນການນຸ່ງເຄື່ອງ, ແຕ່ງຕົວ, ທາສີຍັງອີງໃສ່ສີຜິວ ແລະ ໃບໜ້າໃຫ້ເຂົ້າກັນອີກ.

(ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

❖ **ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ປະເພນີການເຮັດບຸນ
- ປະເພນີການໃຫ້ຂອງຕ້ອນ-ເຄື່ອງບັນນາການ ແລະ ການປະຕິບັດຖານ
- ປະເພນີໃນການນຸ່ງຖື ແລະ ແຕ່ງຕົວເອ້ຢ້ອງ

**IV. ວັດ ແລະປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ (2000) **ມະຫາກາບທ້າວຮຸ່ງ-ທ້າວເຈືອງເຫຼັ້ມ**1 ຫໍສະໝຸດແຫ່ງຊາດ.

ດວງເດືອນ ບຸນຍາວົງ, ໂອທອງ ຄຳອິນຊູ, ສົມໄພ ວິໄລສັກ ແລະ ຄຳສອນ ທອງມີໄຊ (2003) **ມະຫາກາບທ້າວຮຸ່ງ-ທ້າວເຈືອງເຫຼັ້ມ 2** ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ຄູສອນປະຈຳວິຊາ



ປທ.ສິມທະເຜີຍ ສີວົງສັກ